THỎA THUẬN
GIỮA CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM VÀ CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO
VỀ
QUY TRÌNH THỰC HIỆN DỰ ÁN ĐẦU TƯ XÂY DỰNG SỬ DỤNG NGUỒN VỐN VIỆN TRỢ CỦA CHÍNH PHỦ VIỆT NAM DO CHÍNH PHỦ LÀO ĐẢM NHẬN CÓ SỰ PHỐI HỢP CỦA CHÍNH PHỦ VIỆT NAM

Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào, sau đây gọi tắt là hai Bên;

Căn cứ Thỏa thuận giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào về Quy chế tài chính và quản lý sử dụng vốn viện trợ của Chính phủ Việt Nam dành cho Chính phủ Lào ký 06 tháng 12 năm 2020 (sau đây gọi tắt là Quy chế tài chính).

Nhằm tăng cường tính chủ động của Chính phủ Lào trong việc tiếp nhận, triển khai các chương trình, dự án sử dụng vốn viện trợ của Chính phủ Việt Nam dành cho Chính phủ Lào, góp phần thúc đẩy và mở rộng quan hệ hợp tác giữa hai nước, hai Bên đã thỏa thuận như sau:

Điều 1
QUY ĐỊNH CHUNG

1. Quy trình này áp dụng cho các dự án sử dụng vốn viện trợ của Chính phủ Việt Nam dành cho Chính phủ Lào do phía Lào tự thực hiện (trên cơ sở đề xuất của Uỷ ban hợp tác Việt Nam-Lào và được sự đồng ý của Thủ tướng Chính phủ Việt Nam).

2. Giải thích từ ngữ

Trong thỏa thuận này, các từ ngữ dưới đây được hiểu như sau:

2.1. "Vốn viện trợ" là các khoản viện trợ không hoàn lại của Chính phủ Việt Nam dành cho Chính phủ Lào được ghi trong Thoả thuận hợp tác song phương hàng năm.

2.2. "Chủ dự án Lào" là các Bộ, ngành, địa phương hoặc các đơn vị nhà nước được Chính phủ Lào giao nhiệm vụ thực hiện, tiếp nhận và quản lý dự án sử dụng vốn viện trợ của Chính phủ Việt Nam dành cho Chính phủ Lào.

2.3. "Ngân hàng phục vụ" là một ngân hàng được lựa chọn trong danh sách các ngân hàng đủ tiêu chuẩn tại Lào để ủy quyền thực hiện việc giao dịch đối ngoại phục vụ dự án.

3. Các tài liệu do Chủ dự án Lào lập gửi các cơ quan liên quan phía Lào và Việt Nam bằng ngôn ngữ tiếng Lào và tiếng Việt, có giá trị như nhau.

Điều 2
QUẢN LÝ THỰC HIỆN DỰ ÁN ĐẦU TƯ XÂY DỰNG

1. Sau khi dự án được Thủ tướng Chính phủ Việt Nam chấp thuận giao phía Lào tự thực hiện (trên cơ sở đề xuất của Uỷ ban hợp tác Lào-Việt Nam và Uỷ ban hợp tác Việt Nam-Lào); Thủ tướng Chính phủ Lào tiến hành giao nhiệm vụ cho chủ dự án. Chủ dự án Lào thành lập Ban quản lý dự án để lập Hồ sơ Dự án. Tổng mức đầu tư xây dựng công trình được tính bằng đồng Kíp Lào (LAK) có quy đổi sang tiền đồng Việt Nam theo tỷ giá tại thời điểm lập dự toán.

2. Sau khi hoàn thành Hồ sơ dự án (hồ sơ dự án theo quy định của pháp luật Lào). Chủ dự án phía Lào gửi 02 bộ hồ sơ Dự án đầu tư xây dựng công trình (gồm: Tờ trình lấy ý kiến tham gia về dự án; phần thuyết minh, thiết kế cơ sở của Dự án và các văn bản pháp lý liên quan) tới Ủy ban hợp tác Lào-Việt Nam. Ủy ban hợp tác Lào-Việt Nam có công thư gửi kèm Hồ sơ Dự án đầu tư xây dựng công trình tới Ủy ban hợp tác Việt Nam-Lào để lấy ý kiến tham gia của các cơ quan liên quan của Việt Nam (nội dung chính của Thuyết minh và Thiết kế cơ sở dự án gửi phía Việt Nam như quy định tại Phụ lục).

3. Trong 30 ngày làm việc từ ngày nhận được đầy đủ hồ sơ dự án từ Ủy ban hợp tác Lào-Việt Nam, Ủy ban hợp tác Việt Nam- Lào sẽ có công thư gửi Ủy ban hợp tác Lào-Việt Nam góp ý kiến đối với dự án.

4. Văn phòng Ủy ban hợp tác Lào-Việt Nam tổng hợp ý kiến đóng góp của các cơ quan phía Lào và Việt Nam gửi tổng hợp chung tới Chủ dự án phía Lào để hoàn chỉnh Hồ sơ Dự án đầu tư xây dựng công trình và trình các cơ quan có thẩm quyền của Chính phủ Lào thẩm định, ra quyết định đầu tư và cấp Giấy phép xây dựng công trình.

5. Sau khi Chính phủ Lào có quyết định phê duyệt dự án, Chủ dự án, Ban quản lý dự án phía Lào tổ chức thực hiện dự án đầu tư xây dựng công trình, bao gồm cả việc đấu thầu, ký kết hợp đồng thực hiện dự án với nhà thầu…; khi kết thúc dự án tiến hành nghiệm thu, bàn giao, quyết toán dự án theo quy định hiện hành của Chính phủ Lào.

Điều 3
QUY TRÌNH MỞ TÀI KHOẢN VÀ CÁCH THANH TOÁN VỐN

1. Lựa chọn Ngân hàng phục vụ và mở tài khoản.

1.1. Ngân hàng phục vụ do Bộ Tài chính Lào chấp thuận có sự thống nhất với Ủy ban hợp tác Lào-Việt Nam và Chủ dự án Lào.

1.2. Ngân hàng phục vụ mở một Tài khoản đặc biệt (TKĐB) do Bộ Tài chính Lào làm chủ tài khoản để phục vụ chi tiêu của dự án, Ngân hàng phục vụ có trách nhiệm thanh toán từ tài khoản theo quy định của phía Lào, cung cấp chủ tài khoản sao kê tài khoản dự án định kỳ hàng tháng và khi có yêu cầu.

2. Mục đích sử dụng và nguyên tắc quản lý TKĐB.

2.1. Để đảm bảo việc giải ngân từ TKĐB được nhanh chóng, chủ TKĐB không mở thêm TKĐB cấp 2, cơ quan quản lý TKĐB có trách nhiệm giải ngân vốn từ TKĐB trực tiếp cho các khoản chi tiêu của dự án.

2.2. Không sử dụng vốn viện trợ được ứng vào TKĐB cho các chi tiêu không hợp lệ của dự án, hoặc các nội dung chi khác không thuộc dự án. Vốn viện trợ chỉ được giải ngân khi có nhu cầu chi tiêu hợp lệ được xác nhận của dự án.

2.3. Trường hợp phát hiện các khoản chi sai mục đích từ TKĐB, phía Lào có trách nhiệm thu hồi lại các khoản chi đó để chuyển trả TKĐB hoặc chuyển trả phía Việt Nam nếu TKĐB đã đóng (sau khi hết hạn giải ngân).

3. Quy trình thanh toán.

3.1. Tạm ứng vốn vào Tài khoản đặc biệt

Căn cứ kế hoạch triển khai dự án và kế hoạch năm đầu được hai bên thống nhất, Bộ Tài chính Lào có công thư gửi Bộ Tài chính Việt Nam đề nghị chuyển tiền tạm ứng lần đầu vào TKĐB. Số tiền tạm ứng lần đầu tối đa bằng 50% kế hoạch vốn được bố trí năm đầu cho dự án.

Bộ Tài chính Việt Nam cấp kinh phí tạm ứng đồng USD theo tỷ giá bán chuyển khoản của Ngân hàng phục vụ tại thời điểm giao dịch.

3.2. Đề nghị Thanh toán từ Tài khoản đặc biệt.

3.2.1. Thực hiện thanh toán từ TKĐB trên nguyên tắc: đảm bảo các khoản chi đúng mục tiêu, đúng hợp đồng, đúng định mức, đúng đơn giá trên cơ sở khối lượng hoàn thành được nghiệm thu hoặc mức tạm ứng hợp lệ theo quy định của hợp đồng. Mức tạm ứng cho một hợp đồng không vượt quá 30% giá trị hợp đồng đó.

3.2.2. Hồ sơ thanh toán bao gồm những nội dung và tài liệu chủ yếu sau:

- Hồ sơ dự án đầu tư xây dựng công trình.
- Quyết định phê duyệt dự án.
- Văn bản lựa chọn nhà thầu theo quy định của Nghị định đấu thầu Lào.
- Hợp đồng kinh tế giữa Chủ đầu tư với nhà thầu.
- Dự toán và Quyết định phê duyệt dự toán.
- Giấy đề nghị tạm ứng hoặc thanh toán vốn do Chủ dự án Lào lập gửi cơ quan cấp vốn.

3.2.3. Khi có nhu cầu thanh toán, Chủ dự án phía Lào lập bộ hồ sơ thanh toán theo quy định tại điểm 3.2.2 để đề nghị giải ngân từ TKĐB cho các khoản chi tiêu hợp lệ. Cơ quan quản lý tài chính phía Lào (Bộ Tài chính) kiểm tra và thanh toán cho các chi tiêu của dự án từ TKĐB.

3.2.4. Phía Lào tổ chức kiểm tra chi tiêu căn cứ theo quy định quản lý tài chính của Lào và Thỏa thuận này, đảm bảo các khoản chi đúng quy định, có đầy đủ

hoá đơn, chứng từ. Không sử dụng nguồn vốn của dự án được tạm ứng vào TKĐB để chi tiêu cho những nội dung khác không hợp lệ hoặc không thuộc dự án.

3.3. Chuyển tiền vào Tài khoản đặc biệt.

Bộ Tài chính Lào gửi Bộ Tài chính Việt Nam đơn rút vốn bổ sung kèm theo bảng kê các khoản đã thanh toán cùng các tài liệu sau (kèm theo bản dịch tiếng Việt):

- Hợp đồng (mỗi hợp đồng có mã số, chỉ gửi một lần)
- Sao kê của Ngân hàng chứng minh việc đã thanh toán cho nhà thầu
- Công văn đề nghị thanh toán của nhà thầu
- Chứng từ kiểm soát chi của Bộ Tài chính Lào hoặc công văn đồng ý cho giải ngân của Bộ Tài chính Lào

Căn cứ vào đề nghị của Bộ Tài chính Lào, Bộ Tài chính Việt Nam thực hiện chuyển tiền bổ sung vào TKĐB. Trị giá tiền bổ sung vào TKĐB của từng lần rút vốn bằng 100% trị giá đề nghị rút vốn bổ sung cho đến khi phần vốn còn lại chưa chuyển vào TKĐB bằng giá trị tạm ứng lần đầu vào TKĐB. Sau thời điểm này, giá trị bổ sung từng lần vào TKĐB bằng 50% trị giá đề nghị rút vốn bổ sung.

4. Tất toán Tài khoản.

Sau khi kết thúc thời hạn giải ngân, Bộ Tài chính Lào gửi công thư cho Bộ Tài chính Việt Nam để tất toán tài khoản cùng bảng kê chi tiêu kèm theo chứng từ liên quan của đợt giải ngân cuối, đảm bảo mọi khoản chi từ TKĐB đều phải có hoá đơn, chứng từ. Kinh phí còn dư trên TKĐB hoặc các khoản chi không có chứng từ hợp lệ được chuyển trả cho phía Việt Nam, vào tài khoản do phía Việt Nam thông báo.

5. Báo cáo.

5.1. Định kỳ 6 tháng, Ban quản lý dự án lập báo cáo về tiến độ thực hiện và việc sử dụng nguồn vốn trên TKĐB gửi Chủ dự án phía Lào, Bộ Tài chính, Bộ Kế hoạch và Đầu tư và Ủy ban hợp tác hai nước làm căn cứ theo dõi, giám sát.

5.2. Sau khi tất toán tài khoản, Chủ dự án phía Lào có trách nhiệm lập báo cáo kết thúc dự án, đánh giá hoàn thành dự án, so sánh các kết quả đã đạt được với các mục tiêu ban đầu của dự án, tình hình sử dụng kinh phí viện trợ và vốn đối ứng chuyển cho Bộ Tài chính Lào. Sau khi xem xét, Bộ Tài chính Lào tổng hợp và gửi cho Ủy ban hợp tác Lào- Việt Nam, Ủy ban hợp tác Việt Nam- Lào, đồng gửi cho Bộ Tài chính Việt Nam (để báo cáo kinh phí viện trợ) để các cơ quan trên tổng hợp vào trong báo cáo tình hình thực hiện dự án trình Thủ tướng Chính phủ hai nước.

6. Quyết toán.

6.1. Quyết toán tài chính.

Hàng năm, Chủ dự án Lào lập quyết toán dự án theo quy định hiện hành của Lào, gửi Bộ Tài chính Lào để xem xét, phê duyệt. Sau khi phê duyệt quyết toán năm tài chính của dự án, Bộ Tài chính Lào gửi Bộ Tài chính Việt Nam để quyết toán kinh phí viện trợ cho Chính phủ Lào.

6.2. Quyết toán hoàn thành dự án.

Sau khi dự án hoàn thành, Chủ dự án lập quyết toán hoàn thành dự án theo quy định của Lào gửi Bộ Tài chính Lào để xem xét, phê duyệt. Sau khi duyệt quyết toán hoàn thành dự án, Bộ Tài chính Lào gửi Bộ Tài chính Việt Nam.

7. Giám sát, kiểm toán.

7.1. Ủy ban hợp tác hai nước có thể độc lập, hoặc phối hợp với các cơ quan liên quan thực hiện việc kiểm tra, thanh tra định kỳ (6 tháng 1 lần) hoặc đột xuất đối với dự án.

7.2. Định kỳ hàng năm và sau khi kết thúc dự án, trên cơ sở thống nhất với phía Việt Nam, phía Lào lựa chọn tổ chức kiểm toán quốc tế độc lập để kiểm toán việc sử dụng TKĐB và gửi các báo cáo kiểm toán cho Bộ Tài chính Việt Nam và Ủy ban hợp tác Việt Nam- Lào để theo dõi. Báo cáo kiểm toán cuối cùng được gửi cho phía Việt Nam không muộn hơn 6 tháng sau khi kết thúc dự án.

Kinh phí kiểm toán được lấy từ nguồn kinh phí viện trợ của dự án, được xác định trong dự toán được phê duyệt.

Điều 4
TỔ CHỨC THỰC HIỆN

Thỏa thuận này có hiệu lực từ ngày ký, các vướng mắc phát sinh trong quá trình tổ chức, triển khai Thỏa thuận này được giải quyết thông qua đàm phán giữa hai Bên.

Thỏa thuận này được lập tại thủ đô Viêng Chăn, CHDCND Lào, ngày 21 tháng 3 năm 2022 thành 02 (hai) bản gốc, mỗi bản bằng tiếng Việt và tiếng Lào, tất cả các văn bản có giá trị như nhau./.

TM. CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM	**TM. CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO**
NGUYỄN CHÍ DŨNG **Bộ trưởng Bộ Kế hoạch và Đầu tư**	**KHĂM-CHÊN VÔNG-PHÔ-SỸ** **Bộ trưởng Bộ Kế hoạch và Đầu tư**

PHỤ LỤC

1. Nội dung chính của Thuyết minh của dự án đầu tư xây dựng công trình:

1.1. Sự cần thiết và mục tiêu đầu tư xây dựng.

1.2. Mô tả về quy mô và diện tích xây dựng công trình, các hạng mục công trình thuộc dự án; phân tích lựa chọn phương án kỹ thuật, công nghệ và công suất.

1.3. Các giải pháp thực hiện bao gồm:

a. Phương án về giải phóng mặt bằng và phương án hỗ trợ nếu có.

b. Các phương án thiết kế kiến trúc đối với công trình trong đô thị và công trình có yêu cầu kiến trúc.

c. Phương án khai thác dự án và sử dụng lao động.

d. Phân đoạn thực hiện, tiến độ thực hiện và hình thức quản lý dự án.

1.4. Đánh giá tác động môi trường, các giải pháp phòng cháy, chữa cháy và các yêu cầu về quốc phòng, an ninh.

1.5. Tổng mức đầu tư của dự án, nhu cầu sử dụng vốn theo tiến độ, phương án hoàn trả vốn đối với dự án có yêu cầu thu hồi vốn, phân tích đánh giá hiệu quả kinh tế-tài chính, hiệu quả xã hội của dự án.

1.6. Tổng mức đầu tư xây dựng công trình được tính bằng Kíp Lào (LAK) có quy đổi sang tiền đồng Việt Nam theo tỷ giá tại thời điểm lập dự toán. Chi phí cho dự án đầu tư xây dựng công trình tại đâu được áp dụng đơn giá và những quy định về quản lý giá tại nơi đó.

1.7. Chi phí thuế đối với dự án không được tính trong vốn viện trợ của Chính phủ Việt Nam.

1.8. Cung cấp các hồ sơ tài liệu liên quan đến đơn giá, định mức xây lắp, các tài liệu cần thiết về tự nhiên, xã hội, quy hoạch phát triển và các quy định khác liên quan đến việc xác định tổng mức đầu tư xây dựng công trình.

2. Nội dung chính của Thiết kế cơ sở dự án:

2.1. Thiết kế cơ sở là thiết kế được thực hiện trong giai đoạn lập Dự án đầu tư xây dựng công trình trên cơ sở phương án thiết kế được lựa chọn, bảo đảm thể hiện được các thông số kỹ thuật chủ yếu phù hợp với các quy chuẩn, tiêu chuẩn được áp dụng, là căn cứ để triển khai các bước thiết kế tiếp theo.

2.2. Nội dung thiết kế cơ sở bao gồm phần thuyết minh và phần bản vẽ.

a. Phần thuyết minh thiết kế cơ sở bao gồm các nội dung.

- Giới thiệu tóm tắt địa điểm xây dựng, phương án thiết kế; tổng mặt bằng dự án hoặc phương án tuyến công trình đối với công trình xây dựng theo tuyến; vị trí, quy mô xây dựng các hạng mục công trình; việc kết nối giữa các hạng mục công trình thuộc dự án và với hạ tầng kỹ thuật của khu vực.

- Phương án công nghệ, dây chuyền công nghệ đối với công trình có yêu cầu công nghệ.

- Phương án kiến trúc đối với công trình có yêu cầu kiến trúc.

- Phương án kết cấu chính, hệ thống kỹ thuật, hạ tầng kỹ thuật chủ yếu của công trình.

- Phương án bảo vệ môi trường, phòng cháy, chữa cháy theo quy định của pháp luật Lào.

- Danh mục các quy chuẩn, tiêu chuẩn chủ yếu được áp dụng.

b. Phần bản vẽ thiết kế cơ sở bao gồm các nội dung:

- Bản vẽ tổng mặt bằng công trình hoặc bản vẽ bản đồ phương án tuyến công trình đối với công trình xây dựng theo tuyến.

- Sơ đồ công nghệ, bản vẽ dây chuyền cong nghệ đối với công trình có yêu cầu công nghệ.

- Bản vẽ phương án kiến trúc đối với công trình có yêu cầu kiến trúc.

- Bản vẽ phương án kết cấu chính, hệ thống kỹ thuật, hạ tầng kỹ thuật chủ yếu của công trình, kết nối với hạ tầng kỹ thuật của khu vực.

ຂໍ້ຕົກລົງ

ລະຫວ່າງ ລັດຖະບານ ແຫ່ງ ສສ ຫວຽດນາມ ແລະ ລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບ

ລະບຽບປະຕິບັດໂຄງການລົງທຶນກໍ່ສ້າງ ທີ່ນຳໃຊ້ທຶນຊ່ວຍເຫຼືອ ຂອງລັດຖະບານ ຫວຽດນາມ ເຊິ່ງແມ່ນລັດຖະບານລາວ ເປັນຜູ້ຮັບຜິດຊອບປະຕິບັດ ໂດຍມີການປະສານສົມທົບ ກັບ ລັດຖະບານຫວຽດນາມ

ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຕໍ່ໄປນີ້ເອີ້ນຫຍໍ້ວ່າ ສອງຝ່າຍ;

ອີງຕາມຂໍ້ຕົກລົງ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບລະບຽບການເງິນ ແລະ ການຄຸ້ມຄອງການນຳໃຊ້ທຶນຊ່ວຍເຫຼືອ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ທີ່ໄດ້ເຊັນກັນ ໃນວັນທີ 06 ທັນວາ 2020 (ຕໍ່ໄປນີ້ເອີ້ນຫຍໍ້ວ່າ ລະບຽບການເງິນ).

ເພື່ອເພີ່ມທະວີຄວາມເປັນເຈົ້າການ ຂອງ ລັດຖະບານລາວ ໃນການຮັບ ແລະ ຈັດຕັ້ງປະຕິບັດບັນດາ ກິດຈະການ, ໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອ ຂອງລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ, ປະກອບສ່ວນ ຊຸກຍູ້ ແລະ ເປີດກ້ວາງການພົວພັນຮ່ວມມື ລະຫວ່າງ ສອງປະເທດ, ສອງຝ່າຍ ຕົກລົງກັນດັ່ງນີ້:

ມາດຕາ 1
ຂໍ້ກຳນົດທົ່ວໄປ

1. ລະບຽບການນີ້ ແມ່ນໃຊ້ແກ່ບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ ໃຫ້ແກ່ລາວ ເຊິ່ງແມ່ນລັດຖະບານລາວ ເປັນຜູ້ຮັບຜິດຊອບປະຕິບັດ (ບົນພື້ນຖານການນຳສະເໜີຂອງຄະນະກຳມະການຮ່ວມມື ຫວຽດນາມ-ລາວ ແລະ ໄດ້ຮັບການເຫັນດີຂອງນາຍົກລັດຖະມົນຕີຫວຽດນາມ).

2. ການອະທິບາຍຄຳສັບ.

ຄຳສັບຕ່າງໆ ທີ່ໄດ້ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້ :

2.1. "ທຶນຊ່ວຍເຫຼືອ" ໝາຍເຖິງທຶນຊ່ວຍເຫຼືອລ້າ ຈາກລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ເຊິ່ງໄດ້ລະບຸໄວ້ໃນຂໍ້ຕົກລົງວ່າດ້ວຍການຮ່ວມມືທະວິພາຄີ ປະຈຳປີ.

2.2. "ເຈົ້າຂອງໂຄງການຝ່າຍລາວ" ໝາຍເຖິງບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ຫຼື ອົງການຈັດຕັ້ງລັດ ທີ່ໄດ້ຮັບການມອບໝາຍຈາກລັດຖະບານລາວ ໃຫ້ເປັນຜູ້ປະຕິບັດ, ຮັບ ແລະ ຄຸ້ມຄອງໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ຂອງ ລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ.

2.3. "ທະນາຄານໃຫ້ບໍລິການ" ແມ່ນທະນາຄານໃດໜຶ່ງ ທີ່ໄດ້ຮັບການຄັດເລືອກຈາກບັນດາທະນາຄານທີ່ມີເງື່ອນໄຂຄົບຖ້ວນ ຢູ່ ສປປ ລາວ ເພື່ອໃຫ້ການບໍລິການ ດ້ານການເງິນແກ່ໂຄງການ.

3. ບັນດາເອກະສານໂຄງການ ແມ່ນເຈົ້າຂອງໂຄງການຝ່າຍລາວ ເປັນຜູ້ສ້າງ ແລະ ນຳສົ່ງໃຫ້ບັນດາອົງການທີ່ກ່ຽວຂ້ອງຂອງລາວ ແລະ ຫວຽດນາມ ດ້ວຍພາສາລາວ ແລະ ພາສາຫວຽດ ມີຄຸນຄ່າເທົ່າທຽມກັນ.

ມາດຕາ 2
ການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ

1. ພາຍຫຼັງ ໂຄງການໄດ້ຮັບການຮັບຮອງຈາກ ນາຍົກລັດຖະມົນຕີຫວຽດນາມ ມອບໃຫ້ຝ່າຍລາວ ເປັນຜູ້ຈັດຕັ້ງປະຕິບັດ (ບົນພື້ນຖານການນຳສະເໜີ ຂອງຄະນະກຳມະການຮ່ວມມື ລາວ-ວຽດນາມ ແລະ ຄະນະກຳມະການຮ່ວມມື ຫວຽດນາມ-ລາວ); ນາຍົກລັດຖະມົນຕີລາວ ດຳເນີນການມອບໃຫ້ເຈົ້າຂອງໂຄງການ. ເຈົ້າຂອງໂຄງການຝ່າຍລາວ ແຕ່ງຕັ້ງຄະນະຄຸ້ມຄອງໂຄງການ ເພື່ອປະກອບເອກະສານໂຄງການ. ມູນຄ່າການລົງທຶນກໍ່ສ້າງກິດຈະການທັງໝົດ ແມ່ນຄິດໄລ່ເປັນສະກຸນເງິນກີບ (LAK) ໂດຍມີການແລກປ່ຽນເປັນສະກຸນເງິນຫວຽດນາມດົ່ງຕາມອັດຕາແລກປ່ຽນ ໃນໄລຍະຂຶ້ນແຜນງົບປະມານໂຄງການ.

2. ເມື່ອສຳເລັດການປະກອບເອກະສານໂຄງການ (ປະກອບເອກະສານໂຄງການ ຕາມລະບຽບກົດໝາຍຂອງລາວ). ເຈົ້າຂອງໂຄງການຝ່າຍລາວ ນຳສົ່ງເອກະສານໂຄງການລົງທຶນກໍ່ສ້າງກິດຈະການ ຈຳນວນ 02 ຊຸດ (ລວມມີ: ໜັງສືຂໍການປະກອບຄຳເຫັນຕໍ່ເອກະສານໂຄງການ; ບົດອະທິບາຍ, ການອອກແບບເບື້ອງຕົ້ນຂອງໂຄງການ ແລະ ບັນດາເອກະສານນິຕິກຳທີ່ກ່ຽວຂ້ອງ) ໃຫ້ແກ່ຄະນະກຳມະການຮ່ວມມື ລາວ-ຫວຽດນາມ. ຄະນະກຳມະການຮ່ວມມື ລາວ-ຫວຽດນາມ ເຮັດໜັງສືທາງການ ຄັດຕິດເອກະສານໂຄງການລົງທຶນກໍ່ສ້າງກິດຈະການ ເຖິງຄະນະກຳມະການຮ່ວມມື ຫວຽດນາມ-ລາວ ເພື່ອຂໍຄຳເຫັນຈາກບັນດາອົງການ ທີ່ກ່ຽວຂ້ອງຂອງຫວຽດນາມ (ເນື້ອໃນຫຼັກຂອງບົດອະທິບາຍ ແລະ ການອອກແບບໂຄງການເບື້ອງຕົ້ນ ນຳສົ່ງຝ່າຍຫວຽດນາມ ໄດ້ກຳນົດໃນສາລະບານຊ້ອນທ້າຍ).

3. ພາຍຫລັງໄດ້ຮັບເອກະສານໂຄງການຄົບຖ້ວນ, ໃນກຳນົດເວລາ 30 ວັນລັດຖະການ, ຄະນະກຳມະການຮ່ວມມື ຫວຽດນາມ-ລາວ ຕ້ອງສົ່ງບົດປະກອບຄຳເຫັນຕໍ່ເອກະສານໂຄງການ ໃຫ້ຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

4. ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ສັງລວມຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວ ແລະ ຫວຽດນາມ ສົ່ງໃຫ້ເຈົ້າຂອງໂຄງການຝ່າຍລາວ ເພື່ອປັບປຸງເອກະສານໂຄງການລົງທຶນກໍ່ສ້າງກິດຈະການ ໃຫ້ສົມບູນ ແລະ ນຳສະເໜີຕໍ່ບັນດາອົງການທີ່ມີສິດອຳນາດ ຂອງລັດຖະບານລາວ ປະເມີນຜົນ, ອອກຂໍ້ຕົກລົງອະນຸມັດຮັບຮອງໂຄງການ ແລະ ອອກໃບອະນຸຍາດກໍ່ສ້າງໂຄງການ.

5. ພາຍຫຼັງ ລັດຖະບານລາວ ອອກຂໍ້ຕົກລົງອະນຸມັດຮັບຮອງໂຄງການແລ້ວ, ເຈົ້າຂອງໂຄງການ, ຄະນະຄຸ້ມຄອງໂຄງການຝ່າຍລາວ ຈັດຕັ້ງປະຕິບັດໂຄງການລົງທຶນກໍ່ສ້າງກິດຈະການ, ລວມມີທັງການປະມູນ, ການເຊັນສັນຍາປະຕິບັດໂຄງການກັບຜູ້ຮັບເໝົາ; ເມື່ອສຳເລັດໂຄງການ ດຳເນີນການກວດກາ, ມອບ-ຮັບ, ຊຳລະບັນຊີຂາດຕົວຂອງໂຄງການ ຕາມຂໍ້ກຳນົດຂອງລັດຖະບານລາວ.

ມາດຕາ 3

ການເປີດບັນຊີ ແລະ ການເບີກຈ່າຍເງິນ

1. ຄັດເລືອກທະນາຄານໃຫ້ການບໍລິການ ແລະ ເປີດບັນຊີ

1.1. ທະນາຄານໃຫ້ການບໍລິການ ແມ່ນກະຊວງການເງິນຂອງລາວ ເປັນຜູ້ຕົກລົງບົນພື້ນຖານ ເປັນເອກະພາບ ກັບຄະນະກຳມະການຮ່ວມມື ລາວ - ຫວຽດນາມ ແລະ ເຈົ້າຂອງໂຄງການຝ່າຍລາວ.

1.2. ທະນາຄານໃຫ້ບໍລິການ ຈະເປີດບັນຊີສະເພາະໃຫ້ໂຄງການ ແລະ ກະຊວງການເງິນລາວ. ທະນາຄານ ໃຫ້ການບໍລິການຕາມການສະເໜີ ຂອງກະຊວງການເງິນລາວ ລວມທັງສະໜອງຂໍ້ມູນການເຄື່ອນໄຫວຂອງບັນຊີ (ສະບັບສາເນົາ) ໃຫ້ແກ່ເຈົ້າຂອງບັນຊີ ໃນແຕ່ລະເດືອນ ແລະ ເມື່ອມີຄວາມຕ້ອງການ.

2. ຈຸດປະສົງການນຳໃຊ້ ແລະ ຫຼັກການຄຸ້ມຄອງບັນຊີສະເພາະ

2.1. ເພື່ອຮັບປະກັນການເບີກຈ່າຍເງິນຈາກບັນຊີສະເພາະ ໃຫ້ໄດ້ຢ່າງວ່ອງໄວ, ເຈົ້າຂອງບັນຊີສະເພາະຈະບໍ່ ເປີດບັນຊີຍ່ອຍຕື່ມອີກ; ກະຊວງການເງິນ ດຳເນີນການເບີກຖອນເງິນຈາກບັນຊີສະເພາະ ໃຫ້ແກ່ຮ່ອງໃຊ້ຈ່າຍຕ່າງໆ ຂອງໂຄງການ.

2.2. ຫ້າມນຳໃຊ້ທຶນຊ່ວຍເຫຼືອທີ່ໄດ້ໂອນລ່ວງໜ້າ ເຂົ້າບັນຊີສະເພາະ ເພື່ອໃຊ້ຈ່າຍໂດຍບໍ່ຖືກຕ້ອງຕາມເນື້ອໃນ ໂຄງການ ຫຼື ເນື້ອໃນການໃຊ້ຈ່າຍອື່ນໆ ທີ່ບໍ່ຂຶ້ນກັບໂຄງການ. ທຶນຊ່ວຍເຫຼືອຈະໄດ້ຮັບການເບີກຖອນ ໃນເມື່ອມີ ຄວາມຕ້ອງການນຳໃຊ້ ໂດຍຖືກຕ້ອງຕາມລະບຽບການຄຸ້ມຄອງການເງິນ.

2.3. ໃນກໍລະນີພົບເຫັນການໃຊ້ຈ່າຍຕ່າງໆ ທີ່ບໍ່ຖືກຕ້ອງຕາມຈຸດປະສົງ ຂອງບັນຊີສະເພາະ, ຝ່າຍລາວມີໜ້າທີ່ ຮັບຜິດຊອບເກັບກູ້ ຈຳນວນເງິນດັ່ງກ່າວເຂົ້າໃນບັນຊີສະເພາະຄືນ ຫຼື ສົ່ງຄືນໃຫ້ຝ່າຍຫວຽດນາມ ຖ້າບັນຊີ ສະເພາະ ໄດ້ປິດ (ພາຍຫຼັງໝົດກຳນົດເບີກຈ່າຍ).

3. ຂັ້ນຕອນການຊຳລະ.

3.1. ການເບີກຖອນເງິນລ່ວງໜ້າເຂົ້າບັນຊີສະເພາະ.

ອີງຕາມແຜນການຈັດຕັ້ງປະຕິບັດໂຄງການ ແລະ ແຜນການປີທຳອິດທີ່ສອງຝ່າຍເປັນເອກະພາບ, ກະຊວງ ການເງິນຂອງລາວ ດຳເນີນຂັ້ນຕອນສົ່ງໜັງສືສະເໜີ ເຖິງກະຊວງການເງິນຫວຽດນາມ ເພື່ອຂໍເບີກຖອນເງິນລ່ວງ ໜ້າ. ຈຳນວນເງິນຂໍເບີກຖອນລ່ວງໜ້າສູງສຸດແມ່ນ 50% ຂອງແຜນທຶນທີ່ໄດ້ຈັດສັນ ໃນປີທຳອິດໃຫ້ແກ່ໂຄງການ.

ກະຊວງການເງິນຫວຽດນາມ ດຳເນີນການໂອນເງິນລ່ວງໜ້າ ເປັນເງິນໂດລາສະຫະລັດ ຕາມອັດຕາການ ຂາຍຂອງທະນາຄານ ໃຫ້ການບໍລິການໃນມື້ໂອນ.

3.2. ການສະເໜີຂໍເບີກຈ່າຍເງິນຈາກບັນຊີສະເພາະ.

3.2.1. ປະຕິບັດການຊຳລະຈາກບັນຊີສະເພາະ ຕາມຫຼັກການ: ຮັບປະກັນບັນດາຮ່ອງລາຍຈ່າຍຕ່າງໆ ໃຫ້ຖືກ ຕ້ອງຕາມເປົ້າໝາຍ, ສັນຍາ, ກຳນົດໝາຍ ແລະ ລາຄາຫົວໜ່ວຍ ບົນພື້ນຖານບໍລິມາດໜ້າວຽກທີ່ສຳເລັດ ແລະ ໄດ້ຮັບການກວດກາປະເມີນຜົນ ຫຼື ມູນຄ່າທີ່ເບີກຖອນລ່ວງໜ້ານັ້ນ ຖືກຕ້ອງຕາມຂໍ້ກຳນົດຂອງສັນຍາ. ມູນຄ່າທີ່ ເບີກຖອນລ່ວງໜ້າ ສຳລັບສັນຍາໜຶ່ງ ແມ່ນບໍ່ເກີນ 30% ຂອງມູນຄ່າສັນຍານັ້ນ.

3.2.2. ເອກະສານການຊຳລະສະສາງ ລວມມີບັນດາເນື້ອໃນ ແລະ ເອກະສານຕົ້ນຕໍ ດັ່ງລຸ່ມນີ້:

- ເອກະສານຂອງໂຄງການລົງທຶນກໍ່ສ້າງກິດຈະການ;
- ຂໍ້ຕົກລົງອະນຸມັດຮັບຮອງເອົາໂຄງການ;

- ເອກະສານຄັດເລືອກຜູ້ຮັບເໝົາ ຕາມຂໍ້ກຳນົດຂອງດຳລັດ ວ່າດ້ວຍການຈັດຊື້ ຂອງ ສປປ ລາວ;
- ສັນຍາ ລະຫວ່າງ ເຈົ້າຂອງໂຄງການ ກັບ ຜູ້ຮັບເໝົາ;
- ການຄາດຄະເນມູນຄ່າໂຄງການ ແລະ ຂໍ້ຕົກລົງອະນຸມັດຮັບຮອງເອົາມູນຄ່າໂຄງການ;
- ໜັງສືສະເໜີຂໍເບີກຖອນ ຫຼື ສະສາງເງິນລ່ວງໜ້າ ຂອງເຈົ້າຂອງໂຄງການຝ່າຍລາວ.

3.2.3. ໃນເມື່ອມີຄວາມຕ້ອງການເບີກຈ່າຍເງິນ, ເຈົ້າຂອງໂຄງການຝ່າຍລາວ ຕ້ອງປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3.2.2 ເພື່ອນຳສະເໜີຂໍເບີກຈ່າຍເງິນ ຈາກບັນຊີສະເພາະ ໃຫ້ແກ່ຮ່ວງລາຍຈ່າຍຕ່າງໆ. ກະຊວງ ການເງິນລາວ ກວດກາ ແລະ ດຳເນີນການເບີກຈ່າຍເງິນໃຫ້ແກ່ໂຄງການ ຈາກບັນຊີສະເພາະ.

3.2.4. ຝ່າຍລາວ ຈັດຕັ້ງການກວດກາການໃຊ້ຈ່າຍ ໂດຍອີງຕາມລະບຽບການຄຸ້ມຄອງການເງິນຂອງລາວ ແລະ ຂໍ້ຕົກລົງສະບັບນີ້, ຮັບປະກັນຮ່ວງລາຍຈ່າຍຕ່າງໆ ຖືກຕ້ອງຕາມຂໍ້ກຳນົດ, ມີໜັງສືຢັ້ງຢືນການໃຊ້ຈ່າຍຢ່າງຄົບຊຸດ. ຫ້າມນຳໃຊ້ແຫຼ່ງທຶນຂອງໂຄງການໃນບັນຊີສະເພາະ ເພື່ອໃຊ້ຈ່າຍໄປໃນທາງອື່ນໆ ໂດຍບໍ່ຖືກຕ້ອງຕາມລະບຽບຫຼັກ ການ ຫຼື ບໍ່ນອນຢູ່ໃນໂຄງການ.

3.3. ການຄ່ຽນເງິນເຂົ້າບັນຊີສະເພາະ.

ກະຊວງການເງິນຂອງລາວ ສົ່ງໜັງສືສະເໜີເຖິງກະຊວງການເງິນຫວຽດນາມ ຂໍຄ່ຽນເງິນເພີ່ມ ໂດຍຄັດ ຕິດຕາຕະລາງສະຫຼຸບລາຍຈ່າຍທີ່ໄດ້ຊຳລະ ພ້ອມດ້ວຍບັນດາເອກະສານລຸ່ມນີ້ (ຄັດຕິດສະບັບແປເປັນພາສາຫວຽດ ໄປ ພ້ອມ):

- ສັນຍາ (ແຕ່ລະສັນຍາ ມີເລກລະຫັດ, ນຳສິ່ງພຽງເທື່ອດຽວ);
- ສຳເນົາເອກະສານຢັ້ງຢືນຂອງທະນາຄານ ກ່ຽວກັບການຊຳລະໃຫ້ແກ່ຜູ້ຮັບເໝົາ;
- ໜັງສືສະເໜີຂໍຊຳລະຂອງຜູ້ຮັບເໝົາ;
- ໜັງສືຢັ້ງຢືນການກວດກາລາຍຈ່າຍ ຂອງກະຊວງການເງິນຂອງລາວ ຫຼື ໜັງສືເຫັນດີໃຫ້ເບີກຈ່າຍ ຂອງ ກະຊວງການເງິນຂອງລາວ.

ອີງຕາມການສະເໜີຂອງກະຊວງການເງິນລາວ, ກະຊວງການເງິນຫວຽດນາມ ຈະດຳເນີນການຄ່ຽນເງິນ ເຂົ້າບັນຊີສະເພາະ. ມູນຄ່າການຄ່ຽນເງິນແຕ່ລະງວດ ຈະເທົ່າກັບ 100% ຂອງມູນຄ່າສະເໜີຂໍຄ່ຽນເງິນເພີ່ມ. ເມື່ອ ຈຳນວນເງິນທີ່ຄ່ຽນເພີ່ມ ຫາກເທົ່າກັບຈຳນວນເງິນທີ່ໄດ້ເບີກຖອນລ່ວງໜ້າແລ້ວ, ຈະໄດ້ເລີ່ມຕົ້ນຂັ້ນຕອນການ ສະສາງ ໂດຍຝ່າຍຫວຽດນາມ ຈະຄ່ຽນເງິນໃຫ້ 50% ຂອງມູນຄ່າທີ່ຂໍຄ່ຽນແຕ່ລະຄັ້ງ.

4. ການສະສາງບັນຊີສະເພາະ.

ຫຼັງຈາກສຳເລັດການເບີກຖອນເງິນ, ກະຊວງການເງິນລາວ ນຳສົ່ງໜັງສືເຖິງກະຊວງການເງິນຫວຽດນາມ ເພື່ອສະສາງບັນຊີ ໂດຍຄັດຕິດຕາຕະລາງສະຫຼຸບລາຍຈ່າຍ ແລະ ໜັງສືຢັ້ງຢືນການໃຊ້ຈ່າຍ ທີ່ກ່ຽວຂ້ອງຂອງການ ເບີກຈ່າຍຄັ້ງສຸດທ້າຍ, ຮັບປະກັນທຸກຮ່ວງລາຍຈ່າຍຈາກບັນຊີສະເພາະ ຕ້ອງມີໜັງສືຢັ້ງຢືນຢ່າງຄົບຖ້ວນ. ທຶນທີ່ຍັງ ເຫຼືອ ໃນບັນຊີສະເພາະ ຫຼື ບັນດາຮ່ວງລາຍຈ່າຍ ທີ່ບໍ່ມີໜັງສືຢັ້ງຢືນຖືກຕ້ອງຕາມລະບຽບການ ແມ່ນຈະໄດ້ໂອນຄືນ ໃຫ້ຝ່າຍຫວຽດນາມ, ເຊິ່ງຝ່າຍຫວຽດນາມ ຈະແຈ້ງເລກບັນຊີໃຫ້ຊາບ.

5. ການລາຍງານ

5.1. ທຸກໆ 6 ເດືອນ, ຄະນະຄຸ້ມຄອງໂຄງການ ສ້າງບົດລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ໂຄງການ ແລະ ການນຳໃຊ້ທຶນຊ່ວຍເຫຼືອໃນບັນຊີສະເພາະ ນຳສົ່ງໃຫ້ເຈົ້າຂອງໂຄງການຝ່າຍລາວ, ກະຊວງ ການເງິນ,

ກະຊວງແຜນການ ແລະ ການລົງທຶນ ແລະ ຄະນະກຳມະການຮ່ວມມື ລະຫວ່າງ ສອງປະເທດ ເພື່ອເປັນ ບ່ອນອີງໃນການຕິດຕາມກວດກາ.

5.2. ພາຍຫຼັງສະສາງບັນຊີແລ້ວ, ເຈົ້າຂອງໂຄງການຝ່າຍລາວ ມີໜ້າທີ່ສ້າງບົດລາຍງານສຳເລັດໂຄງການ, ຕີລາຄາຜົນສຳເລັດຂອງໂຄງການ, ສົມທຽບ ລະຫວ່າງ ບັນດາໝາກຜົນທີ່ໄດ້ຮັບ ກັບບັນດາຄາດໝາຍເບື້ອງຕົ້ນຂອງ ໂຄງການ, ສະພາບການນຳໃຊ້ທຶນຊ່ວຍເຫຼືອ ແລະ ທຶນສົມທົບ ນຳສົ່ງໃຫ້ກະຊວງການເງິນລາວ. ພາຍຫຼັງພິຈາລະນາ ແລ້ວ, ກະຊວງການເງິນຂອງລາວ ສັ່ງລວມສົ່ງໃຫ້ຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ຄະນະກຳມະ ການຮ່ວມມື ຫວຽດນາມ-ລາວ; ພ້ອມກັນນັ້ນ, ກໍ່ສົ່ງໃຫ້ກະຊວງການເງິນຫວຽດນາມ (ເພື່ອລາຍງານການນຳໃຊ້ ທຶນຊ່ວຍເຫຼືອ) ເພື່ອໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ ສະຫຼຸບສັງລວມເຂົ້າໃນບົດລາຍງານ ສະພາບການຈັດຕັ້ງ ປະຕິບັດໂຄງການ ຕໍ່ທ່ານນາຍົກລັດຖະມົນຕີ ຂອງສອງປະເທດ.

6. **ການສະສາງຂາດຕົວຂອງບັນຊີໂຄງການ.**

6.1. ໃນການສະສາງຂາດຕົວບັນຊີຂອງໂຄງການ ຕາມປີງົບປະມານ.

ໃນແຕ່ລະປີ, ເຈົ້າຂອງໂຄງການຝ່າຍລາວ ປະກອບເອກະສານຕາມລະບຽບຄຸ້ມຄອງການເງິນຂອງລາວ, ນຳສົ່ງໃຫ້ກະຊວງການເງິນລາວ ເພື່ອພິຈາລະນາຮັບຮອງເອົາ. ຈາກນັ້ນ, ກະຊວງການເງິນລາວ ນຳສົ່ງ ໃຫ້ກະຊວງ ການເງິນຫວຽດນາມ ເພື່ອສະສາງຂາດຕົວການນຳໃຊ້ທຶນຊ່ວຍເຫຼືອ ທີ່ໄດ້ສະໜອງໃຫ້ລັດຖະບານລາວ.

6.2. ການສະສາງຂາດຕົວ ພາຍຫຼັງໂຄງການສຳເລັດ.

ພາຍຫຼັງໂຄງການສຳເລັດ, ເຈົ້າຂອງໂຄງການຕ້ອງປະກອບເອກະສານສະສາງຂາດຕົວບັນຊີຂອງໂຄງການ ຕາມລະບຽບຄຸ້ມຄອງການເງິນລາວ ເພື່ອສົ່ງໃຫ້ກະຊວງການເງິນຂອງລາວ ພິຈາລະນາ ແລະ ຈາກນັ້ນ ກະຊວງ ການເງິນລາວ ຈະນຳສົ່ງເອກະສານດັ່ງກ່າວ ໃຫ້ກະຊວງການເງິນຫວຽດນາມ.

7. **ການຕິດຕາມ, ກວດສອບບັນຊີ:**

7.1. ຄະນະກຳມະການຮ່ວມມືສອງປະເທດ ອາດເປັນເອກະລາດ ຫຼື ປະສານສົມທົບກັບ ບັນດາອົງການ ທີ່ກ່ຽວຂ້ອງດຳເນີນການກວດກາ, ກວດກາໂຄງການປະຈຳໄຕມາດ (6 ເດືອນ ຕໍ່ 1 ຄັ້ງ) ຫຼື ແບບກະທັນຫັນ.

7.2. ໃນແຕ່ລະປີ ແລະ ພາຍຫຼັງ ທີ່ໂຄງການສຳເລັດແລ້ວ, ບົນພື້ນຖານຄວາມເປັນເອກະພາບກັບຝ່າຍ ຫວຽດນາມ, ຝ່າຍລາວ ຄັດເລືອກເອົາອົງການກວດສອບບັນຊີເອກະລາດ ເພື່ອກວດສອບການນຳໃຊ້ບັນຊີສະເພາະ ແລະ ນຳສົ່ງບົດລາຍງານການກວດສອບບັນຊີ ໃຫ້ກະຊວງການເງິນຫວຽດນາມ ແລະ ຄະນະກຳມະການຮ່ວມມື ຫວຽດນາມ-ລາວ ເພື່ອຕິດຕາມ. ບົດລາຍງານການກວດສອບບັນຊີງວດສຸດທ້າຍ ຈະໄດ້ນຳສົ່ງໃຫ້ ຝ່າຍຫວຽດນາມ ຊ້າສຸດບໍ່ໃຫ້ກາຍ 06 ເດືອນ ພາຍຫຼັງສຳເລັດໂຄງການ.

ຄ່າໃຊ້ຈ່າຍໃນການກວດສອບບັນຊີ ແມ່ນຕ້ອງໄດ້ຄິດໄລ່ເຂົ້າໃນມູນຄ່າໂຄງການ ທີ່ໄດ້ຮັບຮອງອະນຸມັດ ໃຫ້ນຳ ໃຊ້ທຶນຊ່ວຍເຫຼືອ.

ມາດຕາ 4
ການຈັດຕັ້ງປະຕິບັດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຂໍ້ຫຍຸ້ງຍາກຂ້ອງຄາ ທີ່ເກີດຂຶ້ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແມ່ນແກ້ໄຂຜ່ານການເຈລະຈາ ລະຫວ່າງສອງຝ່າຍ.

ສາລະບານຊ້ອນທ້າຍ

1. **ເນື້ອໃນຫຼັກຂອງບົດອະທິບາຍໂຄງການລົງທຶນກໍ່ສ້າງກິດຈະການ:**

1.1. ຄວາມຮຽກຮ້ອງຕ້ອງການ ແລະ ເປົ້າໝາຍການລົງທຶນກໍ່ສ້າງ.

1.2. ພັນລະນາ ກ່ຽວກັບຂະໜາດ ແລະ ເນື້ອທີ່ກໍ່ສ້າງກິດຈະການ, ບັນດາໜ້າວຽກກິດຈະການທີ່ນອນໃນໂຄງການ; ວິໄຈຄັດເລືອກແຜນງານດ້ານເຕັກນິກ, ເຕັກໂນໂລຊີ ແລະ ປະສິດທິພາບ.

1.3. ບັນດາວິທີການແກ້ໄຂການຈັດຕັ້ງປະຕິບັດ ປະກອບມີ:

ກ. ແຜນງານດ້ານການບຸກເບີກທີ່ດິນ ແລະ ແຜນງານການຊ່ວຍໜູນ ຖ້າມີ.

ຂ. ບັນດາແຜນງານອອກແບບສະຖາປັດຕະຍະກຳ ສຳລັບກິດຈະການໃນຕົວເມືອງ ແລະ ກິດຈະການທີ່ມີຄວາມຕ້ອງການດ້ານສະຖາປັດຕະຍະກຳ.

ຄ. ແຜນງານການຂຸດຄົ້ນໂຄງການ ແລະ ການນຳໃຊ້ແຮງງານ.

ງ. ແບ່ງໄລຍະການຈັດຕັ້ງປະຕິບັດ, ຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ຮູບການຄຸ້ມຄອງໂຄງການ.

1.4. ປະເມີນຜົນກະທົບສິ່ງແວດລ້ອມ, ບັນດາວິທີການປ້ອງກັນອັກຄີໄພ ແລະ ບັນດາຄວາມຮຽກຮ້ອງຕ້ອງການດ້ານການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

1.5. ມູນຄ່າການລົງທຶນຂອງໂຄງການ, ຄວາມຕ້ອງການນຳໃຊ້ທຶນຕາມຄວາມຄືບໜ້າ, ແຜນງານການຊຳລະທຶນຄືນຕໍ່ກັບໂຄງການທີ່ມີການຮຽກຮ້ອງໃຫ້ຖອນທຶນຄືນ, ວິໄຈຕີລາຄາປະສິດທິຜົນດ້ານເສດຖະກິດ-ການເງິນ, ປະສິດທິຜົນທາງດ້ານສັງຄົມຂອງໂຄງການ.

1.6. ມູນຄ່າການລົງທຶນກໍ່ສ້າງກິດຈະການ ແມ່ນຄິດໄລ່ເປັນສະກຸນເງິນກີບ (LAK) ໂດຍມີການແລກປ່ຽນເປັນເງິນຫວຽດນາມດົ່ງ ຕາມອັດຕາແລກປ່ຽນໃນໄລຍະຂຶ້ນແຜນງົບປະມານໂຄງການ. ຄ່າໃຊ້ຈ່າຍໃຫ້ແກ່ໂຄງການກໍ່ສ້າງກິດຈະການຕັ້ງຢູ່ໃສ ແມ່ນຕ້ອງໄດ້ນຳໃຊ້ຫົວໜ່ວຍລາຄາ ແລະ ລະບຽບກ່ຽວກັບການຄຸ້ມຄອງລາຄາ ຢູ່ສະຖານທີ່ນັ້ນ.

1.7. ຄ່າໃຊ້ຈ່າຍພາສີ-ອາກອນສຳລັບໂຄງການ ບໍ່ໄດ້ຄິດໄລ່ເຂົ້າໃນທຶນຊ່ວຍເຫຼືອຂອງລັດຖະບານຫວຽດນາມ.

1.8. ສະໜອງບັນດາເອກະສານທີ່ກ່ຽວຂ້ອງເຖິງຫົວໜ່ວຍລາຄາ, ອັດຕານຳນິດການກໍ່ສ້າງຕິດຕັ້ງ, ບັນດາເອກະສານທີ່ຈຳເປັນກ່ຽວກັບທຳມະຊາດ, ສັງຄົມ, ແຜນພັດທະນາ ແລະ ບັນດາຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງ ເຖິງການກຳນົດມູນຄ່າການລົງທຶນກໍ່ສ້າງກິດຈະການ.

2. **ເນື້ອຫຼັກຂອງການອອກແບບເບື້ອງຕົ້ນໂຄງການ:**

2.1. ການອອກແບບເບື້ອງຕົ້ນ ແມ່ນການອອກແບບທີ່ປະຕິບັດໃນໄລຍະການສ້າງໂຄງການລົງທຶນກໍ່ສ້າງກິດຈະການ ບົນພື້ນຖານແຜນງານການອອກແບບ ທີ່ໄດ້ຮັບການຄັດເລືອກ, ຮັບປະກັນສະແດງໃຫ້ເຫັນຜົນລັບດ້ານເຕັກນິກເປັນຕົ້ນຕໍ ໂດຍໃຫ້ສອດຄ່ອງກັບບັນດາຂໍ້ກຳນົດມາດຕະຖານທີ່ໄດ້ນຳໃຊ້, ເປັນບ່ອນອີງໃຫ້ແກ່ການຜັນຂະຫຍາຍບັນດາບາດກ້າວຂອງການອອກແບບ ຕໍ່ໄປ.

2.2. ເນື້ອໃນຂອງການອອກແບບເບື້ອງຕົ້ນ ປະກອບດ້ວຍ ພາກອະທິບາຍ ແລະ ພາກແບບແຕ້ມ.

ກ. ພາກອະທິບາຍການອອກແບບເບື້ອງຕົ້ນ ປະກອບມີບັນດາເນື້ອໃນດັ່ງນີ້.

– ແນະນຳໂດຍຫຍໍ້ສະຖານທີ່ກໍ່ສ້າງ, ແຜນງານການອອກແບບ; ເນື້ອທີ່ທັງໝົດຂອງໂຄງການ ຫຼື ແຜນງານການແບ່ງເຂດກິດຈະການ ສຳລັບກິດຈະການກໍ່ສ້າງຕາມການແບ່ງເຂດ; ທີ່ຕັ້ງ, ຂະໜາດການກໍ່ສ້າງບັນດາໜ້າວຽກກິດຈະການ; ການເຊື່ອມໂຍງ ລະຫວ່າງໜ້າວຽກກິດຈະການທີ່ນອນໃນໂຄງການ ແລະ ໂຄງລ່າງດ້ານເຕັກນິກຂອງເຂດທີ່ຕັ້ງໂຄງການ.

– ແຜນງານດ້ານເຕັກໂນໂລຊີ, ຕ່ອງໂສ້ເຕັກໂນໂລຊີ ສຳລັບກິດຈະການທີ່ມີຄວາມຕ້ອງການດ້ານເຕັກໂນໂລຊີ.

– ແຜນງານດ້ານສະຖາປັດຕະຍະກຳ ສຳລັບກິດຈະການທີ່ມີຄວາມຕ້ອງການດ້ານສະຖາປັດຕະຍະກຳ.

– ແຜນງານດ້ານໂຄງປະກອບຫຼັກ, ລະບົບເຕັກນິກ, ໂຄງລ່າງດ້ານເຕັກນິກຕົ້ນຕໍຂອງກິດຈະການ.

– ແຜນງານປົກປັກຮັກສາສິ່ງແວດລ້ອມ, ປ້ອງກັນໄຟອັກຄີໄພ ຕາມຂໍ້ກຳນົດຂອງກົດໝາຍລາວ.

– ລາຍການກຳນົດໝາຍ, ມາດຕະຖານຕົ້ນຕໍທີ່ໄດ້ນຳໃຊ້.

ຂ. ພາກແບບແຕ້ມ ກ່ຽວກັບການອອກແບບເບື້ອງຕົ້ນ ປະກອບມີບັນດາເນື້ອໃນ ດັ່ງນີ້:

– ແບບແຕ້ມເນື້ອທີ່ດິນທັງໝົດຂອງກິດຈະການ ຫຼື ແບບແຕ້ມແຜນທີ່ວິທີການແບ່ງເຂດກິດຈະການ ສຳລັບກິດຈະການກໍ່ສ້າງຕາມການແບ່ງເຂດ.

– ແຜນຜັງດ້ານເຕັກໂນໂລຊີ, ແບບແຕ້ມຕ່ອງໂສ້ດ້ານເຕັກໂນໂລຊີ ສຳລັບກິດຈະການທີ່ມີຄວາມຕ້ອງການດ້ານເຕັກໂນໂລຊີ.

– ແບບແຕ້ມແຜນງານດ້ານສະຖາປັດຕະຍະກຳ ສຳລັບກິດຈະການທີ່ມີຄວາມຕ້ອງການດ້ານສະຖາປັດຕະຍະກຳ.

– ແບບແຕ້ມແຜນງານດ້ານໂຄງປະກອບຫຼັກ, ລະບົບເຕັກນິກ, ໂຄງລ່າງດ້ານເຕັກນິກຕົ້ນຕໍ ຂອງກິດຈະການ, ການເຊື່ອມໂຍງກັບໂຄງລ່າງດ້ານເຕັກນິກຂອງເຂດທີ່ຕັ້ງໂຄງການ.

ຂໍ້ຕົກລົງສະບັບນີ້ ເຮັດຂຶ້ນທີ່ນະຄອນຫຼວງວຽງຈັນ, ສປປ ລາວ ວັນທີ 21 ມີນາ 2022 ເປັນ 02 (ສອງ) ສະບັບຕົ້ນ, ແຕ່ລະສະບັບເປັນພາສາຫວຽດ ແລະ ພາສາລາວ, ທັງສອງສະບັບ ລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ	ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຫງວຽນ ຈີ້ ຢຸງ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ	ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ